**ສະມາຄົມມິດຕະພາບ ລາວ-ຫວຽດນາມ ຂັ້ນສູນກາງ**
**LAOS – VIETNAM FRIENDSHIP ASSOCIATION**
Saythany District, Vientiane Lao P.D.R

ເລກທີ 37 /ສມລ-ຫວ
ນະຄອນຫຼວງວຽງຈັນ, ວັນທີ 11 SEP 2024

# ສານສະແດງຄວາມເຫັນໃຈ

ເຖິງ: ສະຫາຍ ຫງວຽນ ດັກ ວິງ, ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານ ກຳມາທິການວັດທະນະທຳ, ສຶກສາ ຂອງ ສະພາແຫ່ງຊາດ, ປະທານສະມາ ຄົມມິດຕະພາບ ຫວຽດນາມ - ລາວ ຂັ້ນສູນກາງ ທີ່ນັບຖືຢ່າງສູງ.

ຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ຫວຽດນາມ ຂັ້ນສູນກາງ ແລະ ບັນດາສາຂາຢູ່ທ້ອງຖິ່ນ ຂໍສະແດງຄວາມເຫັນໃຈ ແລະ ໂສກເສົ້າເສຍໃຈ ທີ່ໄດ້ຮັບຂ່າວວ່າ ພາຍຸເລກ 3 (ຢາກິ) ໄດ້ພັດເຂົ້າສູ່ພາກເໜືອ ຂອງ ສສ ຫວຽດນາມ ຢ່າງຮຸນແຮງ ໃນໄລຍະວັນທີ 07-08/09/2024 ຜ່ານມາ, ເຮັດໃຫ້ມີຜູ້ເສຍຊີວິດ ແລະ ສ້າງຄວາມເສຍຫາຍຕໍ່ຊັບສິນ ຂອງປະຊາຊົນຫວຽດນາມອ້າຍນ້ອງຢ່າງໜັກໜ່ວງ. ພວກຂ້າພະເຈົ້າ ຂໍສະແດງຄວາມເຫັນໃຈ ແລະ ເສົ້າສະຫຼົດໃຈຕໍ່ເຫດການຄັ້ງນີ້ ແລະ ຂໍແບ່ງເບົາຄວາມເສຍໃຈ ມາຍັງ ສະມາຄົມມິດຕະພາບ ຫວຽດນາມ-ລາວ ແລະ ຜ່ານບັນດາສະຫາຍໄປຍັງ ພັກ, ລັດ ແລະ ອຳນາດການປົກຄອງແຂວງ ກໍ່ຄືປະຊາຊົນຫວຽດນາມອ້າຍນ້ອງ ໂດຍສະເພາະແມ່ນຄອບຄົວຂອງຜູ້ປະສົບເຄາະຮ້າຍຄັ້ງນີ້ດ້ວຍ.

ພວກຂ້າພະເຈົ້າມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາ ຂອງພັກ, ລັດ ແລະ ອຳນາດການປົກຄອງທ້ອງຖິ່ນ, ປະຊາຊົນຫວຽດນາມ ອ້າຍນ້ອງ ຈະຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນເຂດທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດຄັ້ງນີ້ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ.

ດ້ວຍຄວາມນັບຖືຖານສະຫາຍອ້າຍນ້ອງ,

ສະມາຄົມ
ມິດຕະພາບ
ລາວ-ຫວຽດນາມ
ຂັ້ນສູນກາງ

ບັນດິດ. ສຈ. ບໍ່ວຽງຄຳ ວົງດາລາ
ປະທານສະມາຄົມມິດຕະພາບ ລາວ-ຫວຽດນາມ
ຂັ້ນສູນກາງ